ພື້ນທີ່ປູກຢາງພາລາ ຂອງຊາວກະສິກອນຂະໜາດນ້ອຍຢູ່ເມືອງ ສີງ. ຖ່າຍໂດຍ: ສຸກັນ ລາດສະວົງ ປີ 2009.

ການເຊົ່າ ແລະ ສຳປະທານທີ່ດິນລັດ ຢູ່ແຂວງ ຫຼວງນ້ຳທາ 2017

ການຂະຫຍາຍຕົວ ຂອງການເຊົ່າ ແລະ ສຳປະທານທີ່ດິນລັດຢູ່ແຂວງ ຫຼວງນ້ຳທາ

ການລົງທຶນຂະໜາດໃຫຍ່ ໃນຂົງເຂດທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ ໄດ້ເປັນຕົວຂັບເຄື່ອນຕົ້ນຕໍ ໃນການປ່ຽນແປງການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ ຢູ່ໃນເຂດຊົນນະບົດ ຢູ່ແຂວງ ຫຼວງນ້ຳທາ ນັບແຕ່ຕົ້ນຊຸມປີ 2000 ເປັນຕົ້ນມາ. ການອະນຸມັດທີ່ດິນ ຂອງ ລັດໃຫ້ເຊົ່າ ແລະ ສຳປະທານໃນຂະແໜງການກະສິກຳ, ປູກໄມ້ອຸດສາຫະກຳ, ບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ ເລີ່ມຕົ້ນໃນປີ 2001 (2 ໂຄງການ, 25 ເຮັກຕາ) ແລະ ໄດ້ຂະຫຍາຍຕົວຢ່າງໄວວານັບແຕ່ນັ້ນມາ ຈົນເຖິງຈຸດສູງສຸດປີ 2006 ທີ່ໄດ້ອະນຸມັດ 11 ໂຄງການ ກວມເອົາເນື້ອທີ່ປະມານ 30,000 ເຮັກຕາ (ເບິ່ງເສັ້ນສະແດງ 1). ເຖິງແນວໃດກໍ່ຕາມການອະນຸມັດທີ່ດິນຂອງລັດໃຫ້ເຊົ່າ ແລະ ສຳປະທານທີ່ດິນຢູ່ແຂວງ ຫຼວງນ້ຳທາ ໄດ້ຫຼຸດລົງຢ່າງໄວວານັບແຕ່ ປີ 2007 ເປັນຕົ້ນມາ ແລະ ເຖິງວ່າມີການອະນຸມັດ ແຕ່ເປັນໂຄງການຂະໜາດນ້ອຍ. ສາເຫດເຮັດໃຫ້ການເຊົ່າ ແລະ ສຳປະທານຫຼຸດລົງດັ່ງກ່າວ ອາດເນື່ອງມາຈາກ ລັດຖະບານໄດ້ສັ່ງໂຈະການອະນຸມັດທີ່ດິນໃຫ້ເຊົ່າ ແລະ ສຳປະທານສຳລັບກິດ ຈະການປູກໄມ້ວິກ, ຢາງພາລາ ແລະ ຊອກຄົ້ນ-ສຳຫຼວດແຮ່ທາດຈຳນວນ ໜຶ່ງໃນປີ 2007, 2009 ແລະ 2012.



ເສັ້ນສະແດງ 1: ຈຳນວນໂຄງການ ແລະ ເນື້ອທີ່ ທີ່ໄດ້ອະນຸມັດໃຫ້ເຊົ່າ ແລະ ສຳປະທານ ໃນລະຫວ່າງປີ 2001 ແລະ 2016.

ເນື້ອທີ່ອະນຸມັດ

ຢູ່ແຂວງ ຫຼວງນ້ຳທາ ການລົງທຶນໃນການຜະລິດກະສິກຳ ແລະ ປູກໄມ້ອຸດສາຫະກຳເປັນສິນຄ້າ ໂດຍສະເພາະແມ່ນການປູກຢາງພາລາ, ອ້ອຍ ແລະ ກ້ວຍ ສ່ວນໃຫຍ່ນຳໃຊ້ຮູບແບບສັນຍາການຜະລິດຮ່ວມກັບປະຊາຊົນ. ຕົວຢ່າງ ຮູບແບບ ສັນຍາການຜະລິດກະສິກຳ 2+3 ໃນການປູກຢາງພາລາ ໝາຍຄວາມວ່າ ປະຊາຊົນປະກອບສ່ວນ 2 ຢ່າງຄື: ທີ່ດິນ ແລະ ແຮງງານ ແລະ ນັກລົງທຶນປະກອບສ່ວນ 3 ຢ່າງ ຄື: ທຶນ, ເຕັກນິກວິຊາການ ແລະ ຕະຫຼາດ ແລ້ວແບ່ງຜົນປະໂຫຍດຕາມອັດຕາສ່ວນແບ່ງທີ່ໄດ້ຕົກລົງກັນ ຫຼື ແບບເອົາດິນຂອງບຸກຄົນໃຫ້ແກ່ນັກລົງທຶນເຊົ່າ. ສຳລັບການເຊົ່າ ແລະ ສຳປະທານທີ່ດິນຂອງລັດແມ່ນມີໜ້ອຍ. ເຖິງແນວໃດກໍ່ຕາມແຂວງ ຫຼວງນ້ຳທາ ເປັນໜຶ່ງໃນ 3 ແຂວງພາກເໜືອ ທີ່ມີການອະນຸມັດທີ່ດິນຂອງລັດໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດເຊົ່າ ແລະ ສຳປະທານຫຼາຍທີ່ສຸດຮອງຈາກແຂວງ ຊຽງຂວາງ ແລະ ຜົ້ງສາລີ ເທົ່ານັ້ນ. ໃນຊ່ວງປີ 2001 ແລະ 2017, ປະມານ 35,000 ເຮັກຕາ[1] ຫຼື ປະມານ 4% ຂອງເນື້ອທີ່ທົ່ວແຂວງໄດ້ອະນຸມັດໃຫ້ແກ່ 67 ໂຄງການ[2] ເພື່ອເຊົ່າ ແລະ ສຳປະທານ ໃນການຜະລິດກະສິກຳ ແລະ ປູກໄມ້ອຸດສາຫະກຳເພື່ອເປັນສິນຄ້າ, ການຂຸດຄົ້ນ ບໍ່ແຮ່ ແລະ ກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ດັ່ງຕາຕະລາງ 1. ໃນນັ້ນເນື້ອທີ່ອະນຸມັດ ປະມານ 90% (31,214 ເຮັກຕາ) ໄດ້ອະນຸມັດໃຫ້ແກ່ ການປູກໄມ້ອຸດສາຫະກຳ. ນອກຈາກນັ້ນຍັງມີອີກ 5 ໂຄງການ ທີ່ອະນຸມັດໃຫ້ແກ່ການຂອກຄົ້ນ, ສຳຫຼວດ ຫຼື ຂຽນບົດວິພາກເສດຖະກິດ-ເຕັກນິກ ສຳລັບຂະແໜງການບໍ່ແຮ່ ຊຶ່ງກວມເອົາເນື້ອທີ່ປະມານ 142,818 ເຮັກຕາ ຫຼື ປະມານ 15% ຂອງເນື້ອທີ່ທົ່ວແຂວງ (ເບິ່ງຕາຕະລາງ 2). ການເຊົ່າ ແລະ ສຳປະທານທີ່ດິນລັດຢູ່ແຂວງ ຫຼວງນ້ຳທາ ໂດຍລວມແລ້ວເປັນໂຄງການຂະໜາດນ້ອຍ ໂດຍສະເລ່ຍ ໂຄງການໜຶ່ງກວມເອົາເນື້ອທີ່ອະນຸມັດປະມານ 558 ເຮັກຕາ ຊຶ່ງເຫັນວ່າມີຂະໜາດນ້ອຍກວ່າເນື້ອທີ່ສະເລ່ຍຕໍ່ໜຶ່ງໂຄງການຢູ່ ສປປ ລາວຫຼາຍ ຄື 740 ເຮັກຕາ.

ວິທີການ

ຂໍ້ມູນທີ່ນຳສະເໜີຢູ່ໃນເອກະສານນີ້ ໄດ້ມາຈາກຂະບວນການ ດັ່ງນີ້:

- ການສົມທຽບຖານຂໍ້ມູນທີ່ມີຢູ່ (ຖານປີ 2010) ກັບຖານຂໍ້ມູນຂອງບັນດາຂະແໜງການທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ລວມທັງການສັງລວມ ແລະ ເກັບກຳຂໍ້ມູນທີ່ຍັງບໍ່ທັນຄົບຖ້ວນ ຫຼື ຂໍ້ມູນໃໝ່ຈຳນວນໜຶ່ງ. ຂໍ້ມູນທີ່ສັງລວມ ແລະ ເກັບກຳປະກອບດ້ວຍສະຖິຕິຕົ້ນຕໍກ່ຽວກັບໂຄງການເຊົ່າ ແລະ ສຳປະທານທີ່ດິນຂອງລັດ ແລະ ເອກະສານກ່ຽວກັບການອະນຸມັດໂຄງການ.
- ການສ້າງແຜນທີ່ຂອບເຂດທີ່ດິນເຊົ່າ ແລະ ສຳປະທານທີ່ໄດ້ຜັດທະນາແລ້ວແບບມີສ່ວນຮ່ວມຢູ່ຂັ້ນເມືອງ ໂດຍໄດ້ແຕ້ມຂອບເຂດຕອນດິນເຊົ່າ ແລະ ສຳປະທານຂອງໂຄງການທີ່ກຳລັງດຳເນີນກິດຈະການຢູ່ ໂດຍນຳໃຊ້ແຜ່ນທີ່ໆພິມອອກເປັນເຈ້ຍຂະໜາດ A0 ໃນນັ້ນປະກອບມີຂໍ້ມູນກ່ຽວກັບໂຄງການເຊົ່າ ແລະ ສຳປະທານຢູ່ພາຍໃນເມືອງ, ຂໍ້ມູນດ້ານການປົກຄອງ ແລະ ພູມສັນຖານເຊັ່ນ: ຂອບເຂດເມືອງ, ເສັ້ນທາງ, ຈຸດທີ່ຕັ້ງບ້ານ, ແມ່ນ້ຳ ແລະ ອື່ນໆ, ແລະ ພາບຖ່າຍທາງອາກາດທີ່ມີຄວາມຊັດເຈນສູງ.
- ການປຶກສາຫາລືຜົນໄດ້ຮັບຈາກການເກັບກຳຂໍ້ມູນເບື້ອງຕົ້ນຢູ່ຂັ້ນເມືອງ ແລະ ແຂວງເພື່ອເຊັນຮັບຮອງເອົາຂໍ້ມູນ ໂດຍຂະແໜງການທີ່ກ່ຽວຂ້ອງ ແລະ/ຫຼື ເຊັນຮັບຮູ້ຈາກທ່ານເຈົ້າເມືອງ ແລະ/ຫຼື ຫ້ອງວ່າການປົກຄອງແຂວງ.
- ການເກັບກຳຂໍ້ມູນຢູ່ແຂວງ ຫຼວງນ້ຳທາ ໄດ້ຈັດຕັ້ງປະຕິບັດຢູ່ໃນຊ່ວງເດືອນ ເມສາ ຫາ ເດືອນ ພຶດສະພາ 2017.

ເນື້ອທີ່ຜັດທະນາແລ້ວ

ເນື້ອທີ່ອະນຸມັດ ໝາຍເຖິງເນື້ອທີ່ໆນັກລົງທຶນສາມາດຜັດທະນາໃນຊ່ວງອາຍຸການສຳປະທານ. ຊຶ່ງໂດຍທົ່ວໄປແລ້ວເນື້ອທີ່ຜັດທະນາຈະໜ້ອຍກວ່າເນື້ອທີ່ອະນຸມັດ (ຕົວຢ່າງ, ຢູ່ສປປ ລາວ ເນື້ອທີ່ໆໄດ້ຜັດທະນາແລ້ວກວມເອົາພຽງແຕ່ເຄິ່ງໜຶ່ງ (542,322 ເຮັກຕາ) ຂອງເນື້ອທີ່ອະນຸມັດທັງໝົດ (1,019,340 ເຮັກຕາ)). ເນື້ອທີ່ໆໄດ້ຜັດທະນາແລ້ວຢູ່ແຂວງ ຫຼວງນ້ຳທາ ໂດຍລວມແມ່ນສູງກວ່າສັດສ່ວນເນື້ອທີ່ໆໄດ້ຜັດທະນາແລ້ວຢູ່ ສປປ ລາວ ຊຶ່ງເນື້ອທີ່ອະນຸມັດປະມານ 73% (25,415 ເຮັກຕາ)[3] ທີ່ໄດ້ຜັດທະນາແລ້ວມາເຖິງຕົ້ນປີ 2017 ດັ່ງສະແດງ ໃນຕາຕະລາງ 1. ເຖິງແນວໃດກໍ່ຕາມສັດສ່ວນເນື້ອທີ່ໆໄດ້ຜັດທະນາດັ່ງກ່າວແມ່ນມີຄວາມແຕກຕ່າງກັນ ລະຫວ່າງ ຂະແໜງການ ເນື້ອທີ່ໆອະນຸມັດໃຫ້ແກ່ການຂຸດຄົ້ນບໍ່ແຮ່ເກືອບທັງໝົດໄດ້ຜັດທະນາແລ້ວ. ໃນຂະນະທີ່ສັດສ່ວນເນື້ອທີ່ໆໄດ້ຜັດທະນາແລ້ວສຳລັບຂະແໜງກະສິກຳ ກວມເອົາປະມານ 56%, ແລະ 75% ສຳລັບການປູກໄມ້ອຸດສາຫະກຳ. ສຳລັບການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ສ່ວນຫຼາຍພວກເຮົາບໍ່ມີຂໍ້ມູນກ່ຽວກັບເນື້ອທີ່ໆໄດ້ຜັດທະນາ.

ເນື້ອທີ່ອະນຸມັດ ແລະ ຜັດທະນາແລ້ວຕາມປະເພດ ກິດຈະການ

ແຂວງ ຫຼວງນ້ຳທາ ເປັນແຂວງໜຶ່ງທີ່ມີ ຄວາມຫຼາກຫຼາຍທາງດ້ານປະເພດກິດຈະການລົງທຶນໃນຮູບແບບການເຊົ່າ ແລະ ສຳປະທານທີ່ດິນຂອງລັດ ຕ່ຳທີ່ສຸດຢູ່ ສປປ ລາວ ຊຶ່ງມີພຽງແຕ່ 14 ປະເພດກິດຈະການເທົ່ານັ້ນ ແລະ ໃນນັ້ນ 5 ປະເພດກິດຈະການນອນໃນຂະແໜງກະສິກຳ, ສຳລັບການປູກໄມ້ ມີ 3 ປະເພດກິດຈະການ ແລະ ບໍ່ແຮ່ ມີ 5 ກິດຈະການ ແລະ ສ່ວນທີ່ເຫຼືອແມ່ນໄຟຟ້ານ້ຳຕົກ. ເຖິງແນວໃດກໍ່ຕາມ ເນື້ອທີ່ປະມານ 90% (31,000 ເຮັກຕາ) ຂອງເນື້ອທີ່ອະນຸມັດໃຫ້ເຊົ່າ ແລະ ສຳປະທານທົ່ວແຂວງທັງໝົດ ໄດ້ອະນຸມັດໃຫ້ແກ່ການປູກຢາງພາລາ (ເບິ່ງຕາຕະລາງ 1). ທາງດ້ານເນື້ອທີ່ໆໄດ້ຜັດທະນາແລ້ວ, ຫຼາຍໂຄງການໄດ້ຜັດທະນາເນື້ອທີ່ສ່ວນໃຫຍ່ແລ້ວ ຍົກເວັ້ນໂຄງການລ້ຽງໝູ ເຖິງວ່າເປັນໂຄງການບໍ່ໃຫຍ່ ແຕ່ມີສັດສ່ວນເນື້ອທີ່ຜັດທະນາແລ້ວຕ່ຳຫຼາຍ.

ພື້ນທີ່ຂຸດຄົ້ນຖ່ານຫີນຢູ່ເມືອງ ວຽງພູຄາ. ຖ່າຍໂດຍ: ວິງ ນັນທະວິງ ປີ 2009.

[1] ລວມທັງໂຄງການລົງທຶນປູກຢາງພາລາໃນຮູບແບບ 1+4 ທີ່ມີລັກສະນະຂອງສັນຍາຄ້າຍຄືກັນກັບການສຳປະທານທີ່ດິນຂອງລັດ ໝາຍຄວາມວ່າເປັນການຮ່ວມມືກັນ ລະຫວ່າງ ຊາວບ້ານກັບບໍລິສັດ ໃນນັ້ນຊາວບ້ານ ປະກອບສ່ວນ 1 ຢ່າງ ຄື ທີ່ດິນ ແລະ ບໍລິສັດຮັບຜິດຊອບ 4 ຢ່າງ ຄື ທຶນ, ເຕັກນິກວິຊາການ, ແຮງງານ ແລະ ການຕະຫຼາດ. ພາຍຫຼັງປູກຢາງພາລາເປັນເວລາໄລຍະໜຶ່ງແລ້ວ ທັງສອງຝ່າຍຈະແບ່ງປັນຕົ້ນຢາງພາລາກັນ ຕາມສ່ວນແບ່ງທີ່ໄດ້ຕົກລົງກັນ ແລະ ຫຼັງຈາກນັ້ນສ່ວນແບ່ງຂອງນັກລົງທຶນຖືວ່າເປັນການສຳປະທານທີ່ດິນນຳລັດ.

[2] ເຖິງແນວໃດກໍ່ຕາມ ພວກເຮົາບໍ່ມີຂໍ້ມູນກ່ຽວກັບເນື້ອທີ່ອະນຸມັດ ຂອງ 5 ໂຄງການ

[3] ໃນນີ້ພວກເຮົາບໍ່ມີຂໍ້ມູນກ່ຽວກັບເນື້ອທີ່ໆໄດ້ຜັດທະນາແລ້ວຈຳນວນ 8 ໂຄງການ ແລະ ອີກ 3 ໂຄງການຍັງບໍ່ທັນໄດ້ເລີ່ມຕົ້ນຜັດທະນາກິດຈະການເທື່ອ ຫຼື ບໍ່ໄດ້ເຄື່ອນໄຫວເລີຍ.

ຕາຕະລາງ 1: ໂຄງການ, ເນື້ອທີ່ອະນຸມັດ ແລະ ເນື້ອທີ່ພັດທະນາແລ້ວ ແຍກຕາມປະເພດກິດຈະການໃນ ສີ່ ຂະແໜງການ.

ຂະແໜງການ	ຈຳນວນ ແລະ ສັດສ່ວນໂຄງການ		ເນື້ອທີ່ອະນຸມັດ		ເນື້ອທີ່ພັດທະນາແລ້ວ	
	ຈຳນວນ	%	ເຮັກຕາ	%	ເຮັກຕາ	% ທຽບໃສ່ເນື້ອທີ່ອະນຸມັດ
ກະສິກຳ	8	11.94	49	0.14	27	55.46
ໝູ	2	25.00	23	46.58	1	4.37
ກ້ວຍ	1	12.50	15	29.88	15	100.00
ອື່ນໆ	5	62.50	12	23.54	12	100.00
ປູກໄມ້	34	50.75	31,214	90.18	23,487	75.24
ຢາງພາລາ	31	91.18	30,926	99.08	23,444	75.81
ອື່ນໆ	3	8.82	288	0.92	43	14.95
ຂຸດຄົ້ນບໍ່ແຮ່	20	29.85	1,971	5.69	1,811	91.91
ຖ່ານຫີນ	2	10.00	900	45.67	800	88.89
ແຮ່ອັງຕິມອນ	1	5.00	508	25.76	508	100.09
ອື່ນໆ	17	85.00	563	28.57	503	89.35
ເຂື່ອນໄຟຟ້ານ້ຳຕົກ[4]	5	7.46	1,379	3.98	90	6.53
ລວມ	**67**	**100.00**	**34,612**	**100.00**	**25,415**	**73.43**

ຕາຕະລາງ 2: ຈຳນວນໂຄງການ ແລະ ເນື້ອທີ່ອະນຸມັດ ສຳລັບການຂຸດກຄົ້ນ, ສຳຫຼວດ ຫຼື ຂຽນບົດວິພາກເສດຖະກິດ ໃນຂະແໜງ ບໍ່ແຮ່.

ປະເພດກິດຈະການ	ຈຳນວນໂຄງການ	ເນື້ອທີ່ອະນຸມັດ (ເຮັກຕາ)
ແຮ່ທອງແດງ	3	97,416
ຖ່ານຫີນ	1	45,392
ແຮ່ຄຳ	1	10
ລວມທັງໝົດ	**5**	**142,818**

ພື້ນທີ່ສຳປະທານປູກຢາງພາລາຢູ່ເມືອງ ລອງ. ຖ່າຍໂດຍ: ວິງ ນັນທະວົງ ປີ 2009.

ຂໍ້ມູນກ່ຽວກັບເນື້ອທີ່

ເນື້ອທີ່ເຊົ່າ ແລະ ສຳປະທານທີ່ດິນຂອງລັດ ມີຫຼາຍປະເພດ ແລະ ສາມາດ ຮູ້ໄດ້ ຫຼື ຄິດໄລ່ດ້ວຍຫຼາຍວິທີ. ມີຫຼາຍໂຄງການ ພວກເຮົາບໍ່ມີຂໍ້ມູນກ່ຽວກັບ ເອກະສານອະນຸມັດໂຄງການ ແລະ ບາງກໍລະນີເນື້ອທີ່ໆໄດ້ລະບຸຢູ່ໃນ ເອກະສານຂອງໂຄງການບໍ່ກົງກັນ. ສະນັ້ນ, ເນື້ອທີ່ໆໄດ້ນຳສະເໜີຢູ່ໃນ ເອກະສານນີ້ ໝາຍເຖິງ:

- **ເນື້ອທີ່ອະນຸມັດ:** ໝາຍເຖິງເນື້ອທີ່ໃຫຍ່ສຸດທີ່ລະບຸຢູ່ສັນຍາພັດທະນາ ໂຄງການ, ຂໍ້ຕົກລົງອະນຸມັດໃຫ້ເຊົ່າ ແລະ ສຳປະທານ, ໃບອະນຸຍາດການ ຂຸດຄົ້ນແຮ່ທາດ, ສັນຍາເຊົ່າ ແລະ ສຳປະທານ ຫຼື ເນື້ອທີ່ຈາກຂອບເຂດ ອະນຸມັດທີ່ທາງລັດຖະບານກຳນົດໃຫ້.
- **ເນື້ອທີ່ນຳໃຊ້ ຫຼື ພັດທະນາແລ້ວ:** ໝາຍເຖິງເນື້ອທີ່ໃຫຍ່ສຸດທີ່ໄດ້ຈາກ ການສ້າງແຜນທີ່ດິນຂອບເຂດເຊົ່າ ແລະ ສຳປະທານແບບມີສ່ວນຮ່ວມ ຢູ່ຂັ້ນເມືອງ ຫຼື ເອກະສານອື່ນໆທີ່ກ່ຽວຂ້ອງ.
- **ເນື້ອທີ່ຂຸດກຄົ້ນ, ສຳຫຼວດ ຫຼື ຂຽນບົດວິພາກດ້ານເສດຖະກິດ-ເຕັກນິກ (ສະເພາະຂະແໜງບໍ່ແຮ່):** ໝາຍເຖິງເນື້ອທີ່ໃຫຍ່ສຸດທີ່ລະບຸຢູ່ໃນຂໍ້ຕົກ ລົງອະນຸມັດທີ່ດິນໃຫ້ສຳປະທານ, ສັນຍາພັດທະນາໂຄງການ ຫຼື ເນື້ອທີ່ຈາກແຜນທີ່ ຂອບເຂດໂຄງການທີ່ໄດ້ຮັບຈາກວິງການຈັດຕັ້ງທີ່ ກ່ຽວຂ້ອງຂອງລັດ.

[4] ເນື້ອທີ່ການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ໝາຍເຖິງເນື້ອທີ່ ທີ່ຕັ້ງຂອງເຮືອນຈັກເທົ່ານັ້ນ ຊຶ່ງບໍ່ລວມເອົາເຂດອ່າງຮັບນ້ຳ.

ສະພາບແວດລ້ອມພື້ນທີ່ ທີ່ມີການເຊົ່າ ແລະ ສຳປະທານ

ເປົ້າໝາຍໜຶ່ງຂອງລັດຖະບານ ໃນການດຶງດູດການລົງທຶນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ ໃນຂົງເຂດທີ່ດິນ ແລະຊັບພະຍາກອນທຳມະຊາດ ແມ່ນເພື່ອປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເຊັ່ນ: ໂດຍຜ່ານການພັດທະນາພື້ນຖານໂຄງລ່າງ, ວຽກເຮັດງານທຳ ແລະ ນຳເອົາເທັກໂນໂລຢີອັນໃໝ່ ເພື່ອຍົກສູງສະມັດຕະພາບການຜະລິດກະສິກຳຢູ່ເຂດຊົນນະບົດ ເຊັ່ນ: ເຂດເນີນສູງ ທີ່ມີສະພາບຄວາມເໝາະສົມທາງດ້ານເງື່ອນໄຂນິເວດກະສິກຳຕ່ຳ. ຢູ່ແຂວງ ຫຼວງນ້ຳທາ ດັ່ງສະແດງຢູ່ແຜນທີ່ 1, ພື້ນທີ່ການສຳປະທານສ່ວນໃຫຍ່ ໂດຍສະເພາະການປູກໄມ້ອຸດສາຫະກຳສຸມໃສ່ເຂດພື້ນທີ່ລຽບຊາຍແດນ ສປ ຈີນ ເຂດເມືອງສິງ ແລະ ລຽບຕາມແມ່ນ້ຳຂອງຊາຍແດນມ້ຽນມາເຂດເມືອງລອງ ຊຶ່ງມີລັກສະນະແຕກຕ່າງຈາກແຂວງອື່ນ ທີ່ການສຳປະທານສ່ວນໃຫຍ່ສຸມໃສ່ເຂດອ້ອມແອ້ມເທດສະບານແຂວງທີ່ສາມາດເຂົ້າເຖິງໄດ້ສະດວກ. ເຖິງແນວໃດກໍ່ຕາມ ມັນບໍ່ໄດ້ແປກໃຈເລີຍທີ່ນັກລົງທຶນເຫຼົ່ານີ້ ສຸມໃສ່ການລົງທຶນຢູ່ເຂດລຽບຕາມຊາຍແດນດັ່ງກ່າວ ຊຶ່ງມັນອາດມີຄວາມໄດ້ປຽບຫຼາຍດ້ານເຊັ່ນ: ປະຢັດຄ່າໃຊ້ຈ່າຍໃນການຂົນສົ່ງສິ່ງນຳເຂົ້າຈາກ ແລະ ສົ່ງຜົນຜະລິດອອກສູ່ຕະຫຼາດຂ້າມຊາຍແດນ ເນື່ອງຈາກການລົງທຶນສ່ວນໃຫຍ່ຢູ່ແຂວງ ຫຼວງນ້ຳທາ ແມ່ນມາຈາກ ສປ ຈີນ ແລະ ຜະລິດຕະພັນຈາກການລົງທຶນຕົ້ນຕໍ ແມ່ນເພື່ອສົ່ງອອກໄປຕະຫຼາດຢູ່ຝາກຊາຍແດນເບື້ອງ ສປ ຈີນ.

ເຖິງແນວໃດກໍ່ຕາມຢູ່ເມືອງ ນາແລ ເຫັນວ່າເກືອບວ່າບໍ່ມີການລົງທຶນໃນຮູບແບບ ເຊົ່າ ແລະ ສຳປະທານ ເລີຍ ຊຶ່ງອາດເປັນຍ້ອນຄວາມຈິງທີ່ວ່າເມືອງ ນາແລ ທີ່ຕັ້ງຢູ່ຫ່າງໄກຈາກເທດສະບານແຂວງ, ເສັ້ນທາງເຂົ້າເຖິງບໍ່ທັນສະດວກ ແລະ ບໍ່ມີເສັ້ນທາງອອກສູ່ປະເທດໃກ້ຄຽງໂດຍກົງ ໂດຍສະເພາະ ສປປ ຈີນ.



ແຜນທີ່ 1: ທີ່ຕັ້ງໂຄງການເຊົ່າ ແລະ ສຳປະທານໃນຂະແໜງການ ກະສິກຳ, ປູກໄມ້, ຂຸດຄົ້ນບໍ່ແຮ່ ແລະ ເຂື່ອນໄຟຟ້າມ້ຳຕົກ ທຽບໃສ່ລະດັບຄວາມທຸກຍາກລະດັບບ້ານ ຢູ່ແຂວງ ຫຼວງນ້ຳທາ.



ເສັ້ນສະແດງ 2: ຈຳນວນໂຄງການ (ກ) ແລະ ເນື້ອທີ່ອະນຸມັດ (ຂ) ແຍກຕາມຮູບແບບການລົງທຶນໃນ ສີ່ ຂະແໜງການ.

ຂັ້ນຂອງອົງການຈັດຕັ້ງທີ່ອະນຸມັດໂຄງການ ແລະ ສັນຊາດ ຂອງນັກລົງທຶນ

ໂດຍທົ່ວໄປ ການເຊົ່າ ແລະ ສຳປະທານທີ່ດິນລັດຢູ່ແຂວງ ຫຼວງນ້ຳທາ ສ່ວນໃຫຍ່ເປັນການອະນຸມັດໂດຍຂັ້ນແຂວງ. ເນື້ອທີ່ປະມານ 56% (19,257 ເຮັກຕາ) ທີ່ໄດ້ອະນຸມັດໃຫ້ເຊົ່າ ແລະ ສຳປະທານ ແມ່ນແຂວງເປັນຜູ້ອະນຸມັດ, ປະມານ 39% (13,499 ເຮັກຕາ) ອະນຸມັດໂດຍສູນກາງ ແລະ ເມືອງ ອະນຸມັດ 1,856 ເຮັກຕາ. ຢູ່ແຂວງ ຫຼວງນ້ຳທາ ເນື້ອທີ່ປະມານ 87% (30,234 ເຮັກຕາ) ໄດ້ອະນຸມັດໃຫ້ແກ່ນັກລົງທຶນຈາກຕ່າງປະເທດ (ເບິ່ງເສັ້ນສະແດງ 2) ໃນນັ້ນເກືອບທັງໝົດຂອງເນື້ອທີ່ດັ່ງກ່າວໄດ້ອະນຸມັດ ໃຫ້ນັກລົງທຶນຈາກ ສປ ຈີນ. ສ່ວນການລົງທຶນພາຍໃນກວມເອົາ 9% (3,206 ເຮັກຕາ) ຂອງເນື້ອທີ່ອະນຸມັດທັງໝົດ.

ສະຖານະພາບການຈັດຕັ້ງປະຕິບັດຂອງໂຄງການ

ດັ່ງສະແດງຢູ່ຕາຕະລາງ 3, ໃນຈຳນວນ 67 ໂຄງການທີ່ໄດ້ອະນຸມັດທັງໝົດຢູ່ແຂວງ ຫຼວງນ້ຳທາ ຕົວຈິງມີບໍ່ເຖິງເຄິ່ງໜຶ່ງ (40%, 27 ໂຄງການ) ທີ່ກຳລັງດຳເນີນການຜະລິດ, ⅓ (20 ໂຄງການ) ຢູ່ໃນໄລຍະເລີ່ມຕົ້ນ ຫຼື ກໍ່ສ້າງ. ທີ່ໜ້າສົນໃຈແມ່ນ 18% (12 ໂຄງການ) ຂອງໂຄງການທັງໝົດ ໄດ້ຢຸດເຊົາກ່ອນການສິ້ນສຸດສັນຍາ (ເບິ່ງຄວາມໝາຍຂອງແຕ່ລະສະຖານະພາບການຈັດຕັ້ງປະຕິບັດໂຄງການຢູ່ລຸ່ມນີ້). ທາງດ້ານເນື້ອທີ່, ມີພຽງປະມານ 36% ແລະ 40% ຂອງເນື້ອທີ່ອະນຸມັດ ແລະ ເນື້ອທີ່ພັດທະນາແລ້ວ ຕາມລຳດັບ ແມ່ນຢູ່ຂັ້ນຕອນການດຳເນີນການຜະລິດ, ສ່ວນອີກ 61% ແລະ 58% ຂອງເນື້ອທີ່ອະນຸມັດ ແລະ ພັດທະນາແລ້ວຍັງຢູ່ໃນໄລຍະເລີ່ມຕົ້ນ.

ຕາຕະລາງ 3: ຈຳນວນໂຄງການ, ເນື້ອທີ່ອະນຸມັດ ແລະ ພັດທະນາແລ້ວ ແຍກຕາມສະຖານະພາບການຈັດຕັ້ງປະຕິບັດໂຄງການ.

ສະຖານະພາບ ການຈັດຕັ້ງປະຕິບັດ	ຈຳນວນ ໂຄງການ	ເນື້ອທີ່ ອະນຸມັດ (ຮຕ)	ເນື້ອທີ່ ພັດທະນາແລ້ວ (ຮຕ)
ບໍ່ໄດ້ເຄື່ອນໄຫວເລີຍ	1	20	20
ຍັງບໍ່ທັນເລີ່ມຕົ້ນ	2	103	103
ໄລຍະເລີ່ມຕົ້ນ	20	21,166	21,166
ກຳລັງດຳເນີນການຜະລິດ	27	12,419	12,419
ປະລະ/ບໍ່ເອົາໃຈໃສ່	3	347	347
ຢຸດເຊົາກ່ອນການສິ້ນສຸດສັນຍາ	12	293	293
ສຳເລັດຕາມສັນຍາແລ້ວ	2	265	265
ລວມ	**67**	**34,612**	**34,612**

ຄຳສັບທາງວິຊາການ

ຍັງບໍ່ທັນເລີ່ມຕົ້ນ	ໝາຍເຖິງ ໂຄງການໃດໜຶ່ງທີ່ໄດ້ຮັບອະນຸມັດຈາກລັດຖະບານແລ້ວ ແຕ່ຍັງບໍ່ທັນໄດ້ເລີ່ມຕົ້ນພັດທະນາກິດຈະການຂອງໂຄງການເທື່ອ.
ຂັ້ນຕອນຊອກຄົ້ນ ຫຼື ສຳຫຼວດແຮ່ທາດ	ໝາຍເຖິງ ໂຄງການໃດໜຶ່ງ ທີ່ໄດ້ຮັບອະນຸມັດໃຫ້ດຳເນີນການປະເມີນຫາປະລິມານ ແລະ ຄຸນນະພາບຂອງແຮ່ທາດຢູ່ໃນພື້ນທີ່ໃດໜຶ່ງ. ຊຶ່ງເປັນຂັ້ນຕອນທຳອິດຂອງກິດຈະການການຂຸດຄົ້ນແຮ່ທາດ. ສຳລັບຂັ້ນຕອນນີ້ແມ່ນຈັດຕັ້ງປະຕິບັດສະເພາະໂຄງການໃນຂະແໜງການບໍ່ແຮ່ເທົ່ານັ້ນ.
ບໍ່ໄດ້ເຄື່ອນໄຫວເລີຍ	ໝາຍເຖິງ ໂຄງການໃດໜຶ່ງ ທີ່ໄດ້ຮັບອະນຸມັດຈາກ ລັດຖະບານແລ້ວ ເປັນໄລຍະເວລາຢ່າງໜ້ອຍສາມປີແຕ່ຍັງບໍ່ທັນໄດ້ເລີ່ມຕົ້ນ ພັດທະນາກິດຈະການຂອງໂຄງການ ແລະ ຄາດວ່າຈະບໍ່ໄດ້ເຄື່ອນໄຫວກິດຈະການເລີຍ.
ໄລຍະເລີ່ມຕົ້ນ	ໝາຍເຖິງ ໂຄງການໃດໜຶ່ງ ທີ່ໄດ້ເລີ່ມພັດທະນາກິດຈະການຂອງໂຄງການແລ້ວ ແຕ່ຍັງບໍ່ທັນໄດ້ຮັບຜົນຜະລິດ ຫຼື ມີຜະລິດຕະພັນຂອງໂຄງການເທື່ອ (ເຊັ່ນ: ໄດ້ປູກຕົ້ນຢາງພາລາແລ້ວ ແຕ່ຍັງບໍ່ທັນໄດ້ກີດຢາງເທື່ອ).
ກຳລັງດຳເນີນການຜະລິດ	ໝາຍເຖິງ ໂຄງການໃດໜຶ່ງ ກຳລັງພັດທະນາກິດຈະການຂອງໂຄງການ ແລະ ໄດ້ຮັບຜົນຜະລິດ ຫຼື ມີຜະລິດຕະພັນຂອງໂຄງການແລ້ວ.
ປະລະ/ບໍ່ມີຄວາມຄືບໜ້າ	ໝາຍເຖິງ ໂຄງການໃດໜຶ່ງ ທີ່ໄດ້ຮັບອະນຸມັດຈາກ ລັດຖະບານ ແລະ ໄດ້ເລີ່ມຕົ້ນພັດທະນາກິດຈະການ ຂອງໂຄງການ ແຕ່ບໍ່ມີຄວາມຄືບໜ້າຕາມແຜນການທີ່ວາງໄວ້ຢູ່ໃນເອກະສານຂອງໂຄງການໃນເບື້ອງຕົ້ນນັ້ນ.
ຢຸດເຊົາກ່ອນ ການສິ້ນສຸດສັນຍາ	ໝາຍເຖິງ ໂຄງການໃດໜຶ່ງ ໄດ້ດຳເນີນການພັດທະນາກິດຈະການຂອງໂຄງການໄດ້ໃນໄລຍະເວລາໃດໜຶ່ງ ແຕ່ໄດ້ຢຸດເຊົາກິດຈະການໃນຂະນະທີ່ຍັງບໍ່ທັນຮອດກຳນົດເວລາຂອງສັນຍາ.
ສຳເລັດຕາມສັນຍາແລ້ວ	ໝາຍເຖິງ ໂຄງການໃດໜຶ່ງ ທີ່ໄດ້ພັດທະນາກິດຈະການ ຂອງໂຄງການ ສຳເລັດຕາມໄລຍະເວລາຂອງສັນຍາແລ້ວ.

ຜົນກະທົບຕໍ່ກັບປ່າໄມ້

ຜົນການວິເຄາະຂໍ້ມູນ ໂດຍເອົາແຜນທີ່ຂອບເຂດສຳປະທານທີ່ໄດ້ຜັດທະນາແລ້ວ ມາເຕັງທັບກັບ ຂອບເຂດ ສາມປະເພດປ່າໄມ້ຂອງລັດ ຄື: ປ່າສະຫງວນແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ ແລະ ປ່າຜະລິດແຫ່ງຊາດ ເຫັນວ່າ ຢູ່ແຂວງ ຫຼວງນ້ຳທາ ມີເນື້ອທີ່ເຊົ່າ ແລະ ສຳປະທານທີ່ດິນ ຈຳນວນ 4,174 ເຮັກຕາ ຫຼື 16% ຂອງເນື້ອທີ່ດິນເຊົ່າ ແລະ ສຳປະທານ ທີ່ໄດ້ຜັດທະນາແລ້ວຢູ່ພາຍໃນແຂວງທັງໝົດ ແມ່ນນອນຢູ່ໃນພື້ນທີ່ ສາມປະເພດປ່າໄມ້ຂອງລັດ ໃນນັ້ນ 89% ຂອງເນື້ອທີ່ດັ່ງກ່າວ ນອນຢູ່ໃນປ່າປ້ອງກັນ, 416 ເຮັກຕາ ຢູ່ປ່າສະຫງວນແຫ່ງຊາດ.

ສະຫຼຸບ

ແຂວງ ຫຼວງນ້ຳທາ ເປັນແຂວງໜຶ່ງທີ່ສາມາດດຶງດູດເອົາການລົງທຶນຂອງຕ່າງ ປະເທດໄດ້ຫຼາຍພໍສົມຄວນ ໂດຍສະເພາະການປູກໄມ້ອຸດສາຫະກຳ. ການລົງທຶນ ໃນຮູບແບບການເຊົ່າ ແລະ ສຳປະທານທີ່ດິນລັດຢູ່ແຂວງ ຫຼວງນ້ຳທາ ແມ່ນບໍ່ມີ ຄວາມຫຼາກຫຼາຍປານໃດ ທາງດ້ານປະເພດກິດຈະການລົງທຶນ ແລະ ແຫຼ່ງທີ່ມາ ຂອງນັກລົງທຶນ ເມື່ອທຽບໃສ່ແຂວງອື່ນໆ. ເນື້ອທີ່ປະມານ 90% ເປັນການປູກຢາງ ພາລາ ແລະ ການລົງທຶນເກືອບທັງໝົດ ມາຈາກ ສປ ຈີນ. ການລົງທຶນໃນການປູກ ຢາງພາລາຢູ່ແຂວງ ຫຼວງນ້ຳທາ ແມ່ນມີລັກສະນະຈຸດພິເສດແຕກຕ່າງຈາກ ແຂວງ ອື່ນໆ ໂດຍສະເພາະບັນດາແຂວງພາກກາງ ແລະ ພາກໃຕ້ ຊຶ່ງໄດ້ນຳໃຊ້ຮູບແບບ ຄ້າຍຄືກັນກັບການສຳປະທານທີ່ດິນຂອງລັດ ແຕ່ບໍ່ແມ່ນຮູບການສຳປະທານ ແທ້ໆ. ໝາຍຄວາມວ່າ ເປັນການຮ່ວມມືລະຫວ່າງນັກລົງທຶນ ແລະ ຊາວບ້ານ ໃນຮູບແບບ 1+4 ໝາຍວ່າຊາວບ້ານເອົາທີ່ດິນລວມຂອງບ້ານຮ່ວມກັບບໍລິສັດ ເພື່ອປູກຢາງພາລາ ແລ້ວແບ່ງຕົ້ນຢາງພາລາຕາມອັດສ່ວນທີ່ໄດ້ຕົກລົງກັນພາຍ ຫຼັງປູກເປັນໄລຍະເວລາໃດໜຶ່ງ ແລະ ສຳລັບສ່ວນແບ່ງຂອງ ບໍລິສັດ ຖືວ່າເປັນ ການສຳປະທານທີ່ດິນນຳລັດ.

ການຈັດຕັ້ງປະຕິບັດໂຄງການເຊົ່າ ແລະ ສຳປະທານທີ່ດິນລັດຢູ່ແຂວງ ຫຼວງນ້ຳທາ ຫຼາຍໂຄງການແມ່ນມີຄວາມຄືບໜ້າດີ ເຖິງວ່າຫຼາຍໂຄງການຍັງຢູ່ໃນໄລຍະ ເລີ່ມຕົ້ນກໍ່ຕາມ ແລະ ການທີ່ຫຼາຍໂຄງການຍັງບໍ່ທັນເກັບກູ້ຜົນຜະລິດເທື່ອນັ້ນ ໂດຍສະເພາະການປູກຢາງພາລາ ອາດເປັນຍ້ອນໃນຊ່ວງຕົ້ນຊຸມປີ 2010 ນັ້ນ ລາຄາຢາງພາລາຢູ່ຕະຫຼາດໂລກຕົກຕ່ຳ ຈຶ່ງເຮັດໃຫ້ຫຼາຍໂຄງການຕັດສິນໃຈບໍ່ ທັນກົດຢາງພາລາເທື່ອ. ໂຄງການເຊົ່າ ແລະ ສຳປະທານທີ່ດິນຂອງລັດສ່ວນ ໃຫຍ່ຢູ່ແຂວງ ຫຼວງນ້ຳທາ ໄດ້ສຸມໃສ່ເຂດລຽບຕາມຊາຍແດນ ສປ ຈີນ ຊຶ່ງແຕກ ຕ່າງຈາກບັນດາແຂວງອື່ນໆຢູ່ ສປປ ລາວ ທີ່ ພື້ນທີ່ເຊົ່າ ແລະ ສຳປະທານທີ່ດິນ ຂ ອງລັດ ສ່ວນໃຫຍ່ສຸມໃສ່ເຂດອ້ອມແອ້ມເຫດສະບານແຂວງທີ່ມີລະບົບການ ຄົມມະນາຄົມ ແລະ ການເຂົ້າເຖິງການບໍລິການສາທາລະນະສະດວກແລ້ວ. ເຖິງ ແນວໃດກໍ່ຕາມມັນບໍ່ໄດ້ແປກໃຈເລີຍທີ່ການລົງທຶນເຫຼົ່ານັ້ນ ໄດ້ສຸມໃສ່ພື້ນທີ່ລຽບ ຕາມເຂດຊາຍແດນດັ່ງກ່າວ ເນື່ອງຈາກວ່າການລົງທຶນສ່ວນໃຫຍ່ ແມ່ນມາຈາກ ສປ ຈີນ ແລະ ເພື່ອສົ່ງຜະລິດຕະພັນອອກໄປຕະຫຼາດຢູ່ ສປ ຈີນ ສະນັ້ນ, ການ ລົງທຶນຢູ່ລຽບຕາມເຂດຊາຍແດນດັ່ງກ່າວຈະເຮັດໃຫ້ນັກລົງທຶນສາມາດປະຢັດ ຄ່າໃຊ້ຈ່າຍໃນການຂົນສົ່ງສົ່ງນຳເຂົ້າມາຈາກ ແລະ ສົ່ງຜະລິດຕະພັນຈາກການ ລົງທຶນອອກສູ່ຕະຫຼາດຂ້າມຊາຍແດນຢູ່ເບື້ອງ ສປ ຈີນ.

ຢູ່ແຂວງ ຫຼວງນ້ຳທາ, ພວກເຮົາສັງເກດເຫັນວ່າ ມີໂຄງການເຊົ່າ ແລະ ສຳປະທານ ທີ່ດິນຂອງລັດຈຳນວນໜຶ່ງ ໂດຍສະເພາະ ການປູກຢາງພາລາ ຍັງໄດ້ປະກອບສ່ວນ ໃນການຫັນການຜະລິດກະສິກຳເປັນສິນຄ້າຂອງຊາວກະສິກອນ ຂະໜາດນ້ອຍ ຕື່ມອີກ ເຊັ່ນ: ໃນຮູບແບບການເຮັດສັນຍາການປູກຢາງພາລາແບບມີສ່ວນຮ່ວມ ກັບຊາວບ້ານ ຫຼື ເກັບຊື້ຜົນຜະລິດຢາງພາລາຈາກຊາວບ້ານ ເປັນຕົ້ນ. ເຖິງແນວ ໃດກໍ່ຕາມ ຄຽງຄູ່ກັນນັ້ນ ການເຊົ່າ ແລະ ສຳປະທານທີ່ດິນລັດຢູ່ແຂວງ ຫຼວງນ້ຳທາ ເຫັນວ່າ ຍັງເປັນສິ່ງທ້າທາຍໃຫ້ແກ່ການພັດທະນາຢູ່ພາຍໃນແຂວງບໍ່ໝ້ອຍ ໂດຍ ສະເພາະແມ່ນບັນຫາຜົນກະທົບຕໍ່ກັບສິ່ງແວດລ້ອມ, ປ່າໄມ້ ແລະ ຊີວະນາງາມ ເນື່ອງຈາກພື້ນທີ່ໂຄງການຈຳນວນໜຶ່ງນອນຢູ່ໃນພື້ນ ທີ່ປ່າສະຫງວນແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ ຫຼື ປ່າຜະລິດແຫ່ງຊາດ ຫຼື ຕັ້ງຢູ່ລຽບຕາມແມ່ນ້ຳ ເຊັ່ນ: ແ ມ່ນ້ຳຂອງ ຊຶ່ງອາດມີຄວາມສ່ຽງເຮັດໃຫ້ແຫຼ່ງນ້ຳທຳມະຊາດປົນເປື້ອນຈາກ ສານເຄມີ ຖ້າຫາກບໍ່ມີມາດຕະການຄຸ້ມຄອງທີ່ເໝາະສົມ. ສຳລັບລາຍລະອຽດ ຂອງຜົນກະທົບຈາກການລົງທຶນຕໍ່ກັບສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ລວມທັງຄວາມສອດຄ່ອງກັບລະບຽບກົດໝາຍຢູ່ແຂວງ ຫຼວງນ້ຳທາ ແມ່ນຄວນ ມີການປະເມີນຢ່າງເປັນລະບົບສະເພາະຕື່ມອີກ.

ພື້ນທີ່ສຳປະທານປູກຢາງພາລາລຽບຕາມແມ່ນ້ຳຂອງຢູ່ເມືອງ ສີງ. ຖ່າຍໂດຍ: ສຸກັນ ລາດສະວົງ ປີ 2009.

ພື້ນທີ່ສົ່ງປະທານເພື່ອປູກຢາງພາລາຢູ່ບ້ານພູດອຍ ແຫ່ງໜຶ່ງ ຂອງເມືອງ ນ້ຳທາ. ຖ່າຍໂດຍ: ວິງ ນັນທະວົງ ປີ 2009.

ຄວາມເປັນມາ

ການຄຸ້ມຄອງ ການເຊົ່າ ແລະ ສໍາປະທານທີ່ດິນຂອງລັດເປັນວຽກງານທີ່ສະຫຼັບຊັບຊ້ອນ, ເພາະມັນຕິດພັນກັບຫຼາຍອົງປະກອບ. ໃນນັ້ນຂໍ້ມູນທີ່ສໍາຄັນກ່ຽວກັບການເຊົ່າ ແລະ ສໍາປະທານທີ່ດິນປະກອບດ້ວຍຂໍ້ມູນດ້ານພູມສັນຖານກ່ຽວກັບທີ່ຕັ້ງ ແລະ ຂະໜາດຂອງໂຄງການ, ຂະແໜງການ ແລະ ປະເພດກິດຈະການ. ໂດຍທົ່ວໄປ, ຂໍ້ມູນກ່ຽວກັບການເຊົ່າ ແລະ ສໍາປະທານ ແມ່ນມີຫຼາຍກະຊວງທີ່ຮັບຜິດຊອບໃນການເກັບກໍາ ແລະ ຄຸ້ມຄອງ ແຕ່ບໍ່ມີການປະສານງານກັນ. ພາຍໃຕ້ກອບໂຄງການ ລາວ ດີຊາຍ ອິນ�โฟ (Lao DECIDE info III) ແລະ ໂຄງການ ຄວາມຮູ້ເພື່ອການພັດທະນາ (K4D) ນີ້, ໄດ້ລິເລີ່ມການຮ່ວມມືຂອງຫຼາຍກະຊວງ ໃນການເກັບກໍາ, ຄຸ້ມຄອງ ແລະ ວິເຄາະຂໍ້ມູນທີ່ກ່ຽວກັບການເຊົ່າ ແລະ ສໍາປະທານ, ພ້ອມກັນນັ້ນຍັງໄດ້ພັດທະນາ ວິທີການແບບໃໝ່ໃນການປະເມີນ ການຈັດຕັ້ງປະຕິບັດຂອງໂຄງການເຊົ່າ ແລະ ສໍາປະທານ ໂດຍປະເມີນລົງເລິກເຖິງ ຄວາມສອດຄ່ອງກັບລະບຽບກົດໝາຍ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ. ຂະແໜງການຫຼັກທີ່ມີສ່ວນຮ່ວມໃນການ ສັງລວມເປັນບົດລາຍງານ ມີດັ່ງນີ້:

- ກົມທີ່ດິນ (ທດ), ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ກຊສ)
- ກົມທໍລະນີສາດ ແລະ ແຮ່ທາດ (ກທຮ), ກະຊວງພະລັງງານ ແລະ ບໍ່ແຮ່ (ກພບ)
- ກົມສິ່ງເສີມການລົງທຶນ (ກສທ), ກະຊວງແຜນການ ແລະ ການລົງທຶນ (ກຜທ)
- ກົມແຜນການ ແລະ ການເງິນ (ກຜງ), ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກໍາ (ກຄຜດກ) ແລະ ກົມປ່າໄມ້ (ກປປ), ກະຊວງກະສິກໍາ ແລະ ປ່າໄມ້ (ກປ)
- ກົມບໍ່ແຮ່ (ບຮ), ກພບ
- ສູນບໍລິຫານລັດດ້ວຍລະບົບເອເລັກໂຕນິກ (e-Government), ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ (ກປທສ)

ໂຄງການ Lao DECIDE info III ແລະ K4D ນີ້ ໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ແລະ ອອກແບບ ຈາກ ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ (CDE) ຂອງມະຫາວິທະຍາໄລເບີນ, ປະເທດສະວິດເຊີແລນ ແລະ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກອົງການ ເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດ ສະວິດເຊີແລນ (SDC).

ການເກັບກໍາຂໍ້ມູນການຂຶ້ນບັນຊີໂຄງການເຊົ່າ ແລະ ສໍາປະທານທີ່ດິນຂອງລັດ ໄດ້ຈັດຕັ້ງປະຕິບັດຢູ່ 18 ແຂວງ ທົ່ວປະເທດໃນໄລຍະເດືອນ ມີນາ 2016 ຫາ ກັນຍາ 2017. ສໍາລັບການປະເມີນຄຸນນະພາບການລົງທຶນໂຄງການເຊົ່າ ແລະ ສໍາປະທານທີ່ດິນໄດ້ຈັດຕັ້ງປະຕິບັດຢູ່ 09 ແຂວງ ຄື: ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຄໍາມ່ວນ, ວຽງຈັນ, ຫຼວງພະບາງ, ຊຽງຂວາງ ແລະ ອຸດົມໄຊ, ແລະ ໄດ້ຈັດຕັ້ງປະຕິບັດຢູ່ໃນໄລຍະເດືອນ ເມສາ 2016 ຫາ ສິງຫາ 2017.

Lao DECIDE info
www.decide.la
ຂໍ້ມູນສໍາລັບການພັດທະນາແບບຍືນຍົງ

ໂຄງການ Lao DECIDE info III

ເປັນການລິເລີ່ມຂອງລັດຖະບານແຫ່ງ ສປປ ລາວ ເພື່ອປັບປຸງການ ເຂົ້າເຖິງຂໍ້ມູນ ແລະ ຂໍ້ມູນຂ່າວສານທີ່ສໍາຄັນ ໂດຍການແລກປ່ຽນຂໍ້ມູນ ຂ່າວສານ ລະຫວ່າງຂະແໜງການຂອງລັດ ເພື່ອນໍາໃຊ້ເປັນຫຼັກຖານ ບ່ອນອີງໃຫ້ແກ່ການວາງແຜນໃນການພັດທະນາ ແລະ ຕັດສິນບັນຫາຢູ່ ສປປ ລາວ. ຂໍ້ມູນລາຍລະອຽດກ່ຽວກັບໂຄງການ ສາມາດເບິ່ງໄດ້ທີ່: *www.decide.la*

KNOWLEDGE FOR DEVELOPMENT

ໂຄງການ ຄວາມຮູ້ເພື່ອການພັດທະນາ (K4D)

ໂຄງການ ຄວາມຮູ້ເພື່ອການພັດທະນາ (K4D) ສ້າງຂຶ້ນບົນພື້ນຖານ ຄວາມສໍາເລັດຂອງໂຄງການ ລາວ ດີຊາຍ ອິນ�โฟ ແນໃສ່ການນໍາໃຊ້ຂໍ້ມູນ ແບບເຊື່ອມສານທີ່ມີຢູ່ໃຫ້ເກີດປະໂຫຍດສູງສຸດ ເຂົ້າໃນການສະໜອງ ຫຼັກຖານເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນໃນການພັດທະນາ ແລະ ຕັດສິນບັນຫາຢູ່ ສປປ ລາວ ພ້ອມທັງສະໜັບສະໜູນລັດຖະບານ ໃນ ການສືບຕໍ່ປັບປຸງຖານຂໍ້ມູນແບບເຊື່ອມສານຂອງຂະແໜງການທີ່ມີຢູ່ ແລະ ຂະຫຍາຍຖານຂໍ້ມູນໄປສູ່ຂະແໜງການອື່ນໆທີ່ກ່ຽວຂ້ອງ.

ຂໍ້ມູນເພີ່ມເຕີມຕິດຕໍ່:

ກົມທີ່ດິນ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ
ຖະໜົນທົ່ງຂັນຄໍາ, ນະຄອນຫຼວງວຽງຈັນ
ໂທລະສັບ: +85621 223485

ຫຼື

ກົມແຜນການ ແລະ ການເງິນ, ກະຊວງກະສິກໍາ ແລະ ປ່າໄມ້
ຖະໜົນລ້ານຊ້າງ, ເຂດປະຕູໄຊ ຕູ້ໄປສະນີ: 811, ນະຄອນຫຼວງວຽງຈັນ
ໂທລະສັບ: +85621 415371 ແຟັກ: +85621 415371

ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ (CDE), ຫ້ອງການປະຈໍາ ສປປ ລາວ, ມະຫາວິທະຍາໄລເບີນ, ປະເທດສະວິດເຊີແລນ
ໜ່ວຍ 11, ເຮືອນເລກທີ 136, ຖະໜົນສີເມືອງ, ຮ່ອມ 1 ບ້ານພະໂພ, ນະຄອນຫຼວງວຽງຈັນ
ໂທລະສັບ: +85620 5919 4249
ອີເມວ: lao@cde.unibe.ch
ເວັບໄຊ: www.cde.unibe.ch

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

UNIVERSITÄT BERN
CDE CENTRE FOR DEVELOPMENT AND ENVIRONMENT